## ການບໍຣິການເບິ່ງແຍງລ້ຽງດູທີ່ຊໍານານ

ການບໍຣິການເບິ່ງແຍງລ້ຽງດູຕລອດໄປ,ຢຸດໆຢ່ອນໆ, ຫລືເຄິ່ງເວລາ,ຫລືການບໍຣິການແຕ່ງຕັ້ງການພະຍາບານຊຶ່ງຖືກເອົາໃຫ້ໂດຍນາຍພະຍາບານລົງທະບຽນ.

## ອຸປກອນແລະເຄື່ອງໃຊ້ພະຍາບານພິເສດ

ອຸປກອນແລະເຄື່ອງໃຊ້ທີ່ຈໍາເປັນດ້ານພະຍາບານທີ່ບໍ່ມີໄວ້ໃຫ້ໃນແຜນການເມດິແຄດຂອງຣັດ.

## ການບໍຣິການດ້ານໂຣກຈິດພິເສດ

ການບໍຣິການດ້ານໂຣກຈິດເຈາະຈົງສະເພາະໃສ່ຄວາມຕ້ອງການຂອງບຸກຄົນທີ່ມີຄວາມເສັຽອົງຄະດ້ານການຈະເຣີນເຕີບໂຕ.

## ການຝຶກຝົນແລະການປຶກສາພະນັກງານ/ຄອບຄົວ

ການຝຶກຝົນແລະການປຶກສາຈາກຜູ້ຊ່ຽວຊານໃຫ້ແກ່ຄອບຄົວແລະຜູ້ໃຫ້ການບໍຣິການໂດຍກົງເພື່ອຈະຕອບສນອງຄວາມຕ້ອງການຂອງບຸກຄົນໄດ້ດີກວ່າເກົ່າ.
ສຸປປໂຣທເດແມປລໂຢມເນທ

## ວຽກງານທີ່ຖືກອູ້ມຊູ

ການອູ້ມຊູໄກ້ສິດ,ສ່ວນຕົວແລະເປັນກຸ່ມຕລອດໄປເພື່ອຈະຊ່ອຍຄໍ້າຈູນວຽກງານ.

## ການຂົນສົ່ງ

ການສົ່ງເງິນແທນຄືນໃຫ້ແກ່ຜູ້ໃຫ້ການບໍຣິການສໍາລັບການຂົນສົ່ງທີ່ບໍ່ກ່ຽວກັບການພະຍາບານຊຶ່ງຕ້ອງມີເພື່ອຈະເຂົ້າເຖິງການບໍຣິການສະລະສິດທີ່ຖືກເຈາະຈົງຢູ່ໃນແຜນການອູ້ມຊູສ່ວນບຸກຄົນ.

*ການບໍຣິການເພີ້ມເຕີມມີໄວ້ໃຫ້ແຕ່ພາຍໃຕ້ການສະລະສິດCIIBSເທົ່ານັ້ນ:*

## ເທັກໂນໂລຈີຊ່ວຍເຫລືອ

ຜລິດທະພັນທີ່ຖືກໃຊ້ເພື່ອຈະສົ່ງເສີມໃຫ້ດີຂຶ້ນຫລືຮັກສາຄວາມສາມາດປະຕິບັດງານໄດ້ຂອງບຸກຄົນແລະການບໍຣິການເພື່ອຈະຊ່ວຍເຫລືອບຸກຄົນແລະຜູ້ໃຫ້ການເບິ່ງແຍງດູແລທີ່ຈະເລືອກເອົາ,ເອົາມາ,ແລະໃຊ້ເທັກໂນໂລຈີ.

## ເຄື່ອງນຸ່ງພິເສດ

ເຄືອງນຸ່ງທີ່ບໍ່ມີແນວຈໍາກັດທີ່ຖືກດັດແປງໃຫ້ເຫມາະສົມຕໍ່ຄວາມຕ້ອງການສ່ວນຕົວຂອງບຸກຄົນຊຶ່ງກ່ຽວຂ້ອງນໍາຄວາມເສັຽອົງຄະຂອງເຂົາເຈົ້າ.

## ອາຫານການກິນພິເສດ

ຖືກຈັດແຈງພິເສດຫລືຊະນິດຂອງອາຫານໂດຍສະເພາະທີ່ຕ້ອງການເພື່ອຈະຊ່ວຍຄໍ້າຈູນບຸກຄົນຢູ່ໃນເຮືອນຄອບຄົວແລະການຕີຣາຄາປະເມີນຜົນ,ອາຫານການກິນແລະການບໍຣິການເບິ່ງແຍງຄວບຄຸມຈາກຊ່າງປຸງອາຫານທີ່ຖືກຢັ້ງຢືນ.

## ອຸປກອນແລະເຄື່ອງໃຊ້ໃນການປິ່ນປົວ

ອຸປກອນແລະເຄື່ອງໃຊ້ທີ່ຖືກຣວມເຂົ້ານໍາກັນໃສ່ໃນແຜນການອູ້ມຊູການປະພຶດທີ່ດີຫລືແຜນການປິ່ນປົວອື່ນໆທີ່ຈໍາເປັນເພື່ອວ່າຈະວາງໃຊ້ການປິ່ນປົວຫລືການເຂົ້າແຊກແຊງນໍາ.

## ການດັດແປງຍານພາຫານະ

ການດັດແປງໃຫ້ເຫມາະສົມຕໍ່ຍານພາຫານະເພື່ອຈະອໍານວຍຄວາມສະດວກຄວາມຕ້ອງການທີ່ບໍ່ຄືໃຜຂອງບຸກຄົນ,ເຮັດໃຫ້ມີການປັບຕົວເຂົ້າເຕັມທີ່ໃນຊຸມນຸມຊົນ,ແລະຮັບປະກັນສຸຂະພາບ,ຄວາມສຸກທຸກ,ແລະຄວາມປອດພັຍຂອງບຸກຄົນແລະ/ຫລືສະມາຊິກຄອບຄົວ.

\

---

ກົມDSHSບໍ່ແບ່ງແຍກຊົນຊັ້ນແລະເອົາການເຂົ້າເຖິງເທົ່າທຽມຕໍ່ໂຄງການແລະການບໍຣິການຂອງເຂົາເຈົ້າໃຫ້ສໍາລັບທຸກໆຄົນໂດຍປາສຈາກການເບິ່ງໃສ່ຜິວພັນ,ສີສັນ,ເພດ,ສາສະນາ,ລັດທິ,ສະພາບແຕ່ງງານ,ເຊື້ອຊາດດັ້ງເດີມ,ຄວາມຊອບໃຈ/ການອ່ຽງໄປທາງເພດ,ອາຍຸ,ສະພາບນັກຣົບເກົ່າຫລືການປາກົດມີຢູ່ຂອງຄວາມເສັຽອົງຄະທາງຮ່າງກາຍ,ຄວາມຮູ້ສຶກຫລືມັນສະມອງ.





**ຫ້ອງຖິ່ນ 1**
1611 W. Indiana Ave.
Spokane, WA 99205-4221
Phone (509) 329-2900
1 (800) 462-0624

**ຫ້ອງຖິ່ນ 2**
3700 Fruitvale Blvd.
Suite 200
Yakima, WA 98909-2500
Phone (509) 225-4620
1 (800) 822-7840

**ຫ້ອງຖິ່ນ 3**
840 N. Broadway
Bldg. A., Suite 100
Everett, WA 98201-1288
Phone (425) 339-4833
1 (800) 788-2053

**ຫ້ອງຖິ່ນ 4**
1700 E. Cherry St. # 200
Seattle, WA 98122
Phone (206) 568- 5700
1 (800) 314-3296

**ຫ້ອງຖິ່ນ 5**
1305 Tacoma Ave. S.
Suite 300
Tacoma, WA 98402
Phone (253) 404-6500
1 (800) 248-0949

**ຫ້ອງຖິ່ນ 6**
Point Plaza East
Bldg. 2, 3rd Floor
6860 Capitol Blvd. SE
Olympia, WA 98504-5315
Phone (360) 725-4250
1 (800) 339-8227


ເພື່ອຣາຍຣະອຽດເພີ້ມເຕີມ,
ແວ່ເຂົ້າເບິ່ງແວບໄຊທ໌ຂອງ**DDD** ໄດ້ທີ່:
**www.dshs.wa.gov/ddd**



ພແນກກ່ຽວກັບ
ຄວາມເສັຽອົງຄະດ້ານ
ການຈະເຣີນເຕີບໂຕ

# ການບໍຣິການ ໃນການສະລະສິດ ອີງຕາມ ເຮືອນແລະ ຊຸມນຸມຊົນ

ຣາຍລະອຽດພື້ນຖານກ່ຽວກັບສິດທິໄດ້ຮັບ,ການເຂົ້າເຖິງ,
ແລະການບໍຣິການ.


Washington State
Department of Social & Health Services
ADSA Aging & Disability Services Administration

DSHS 22-605 LA (Rev. 8/09)

# ການເບິ່ງທົ່ວໄປໃນການສະລະສິດ

ການບໍລິການໃນການສະລະສິດອີງຕາມເຮືອນແລະຊຸມນຸມຊົນເອົາການອູ້ມຊູເພີ້ມເຕີມໃຫ້ເມື່ອການບໍລິການຂອງພະແນກເມດີແຄດຂອງຣັດແລະການອູ້ມຊູຢ່າງອື່ນແມ່ນບໍ່ພຽງພໍ.ພະແນກກ່ຽວກັບຄວາມເສັຽອົງຄະດ້ານການຈະເຣີນເຕີບໂຕ(DDD)ສະເນີ

ການບໍລິການໃຫ້ພາຍໃຕ້ການສະລະສິດທີ່ຖືກມຸ່ງຫມາຍໃສ່ຫ້າຢ່າງ–ເບຊິກ,ເບຊິກພລັສ,ການອູ້ມຊູດ້ານການປະພຶດຢູ່ໃນເຮືອນເຂັ້ມງວດຂອງເດັກນ້ອຍ *(CIIBS)*,ຄໍຣ໌,ແລະການປົກ

ປ້ອງຊຸມນຸມຊົນ–ແຕ່ລະຢ່າງພ້ອມທັງຂອບເຂດອັນເຈາະຈົງໃນການຊ່ວຍເຫລືອ,ການບໍລິການ,ແລະຜູ້ຈັດຊື້.ເພື່ອຣາຍຣະອຽດອັນເຈາະຈົງເພີ້ມເຕີມ,ໃຫ້ເບິ່ງເຈັ້ຽຂໍ້ມູນຄວາມຈິງອັນລະອຽດຂອງພະແນກສະລະສິດຢູ່ໃນອິນເຕີແນດແວບໄຊທ໌ຂອງພະແນກ DDDຫລືຕິດຕໍ່ໄປຫາພະແນກDDD.

# ກົດເກນຂອງສິດທິຮັບເອົາການສະລະສິດ

- ບຸກຄົນເປັນຜູ້ຮັບການຊ່ວຍເຫລືອຂອງ DDD.
- ບຸກຄົນມີຄວາມເສັຽອົງຄະອີງຕາມກົດເກນທີ່ຖືກກໍ່ຕັ້ງໄວ້ໃນກົດບັນຍັດຂອງຄວາມປອດພັຍສັງຄົມ.
- ບຸກຄົນຕ້ອງມີຣາຍໄດ້ທີ່ຖືກຄິດໄລ່ຊຶ່ງບໍ່ກາຍເກີນ300% ຂອງມາຕຖານເງິນຊ່ວຍເຫລືອ SSI ຂອງຣັຖບານກາງແລະຊັບສິນທີ່ຖືກຄິດໄລ່ຊຶ່ງບໍ່ກາຍເກີນຫລືຢູ່ໃນໂຄງການປິ່ນປົວສຸຂະພາບສຳລັບຄົນງານທີ່ມີຄວາມເສັຽອົງຄະ(HWD). ໃນກໍຣະນີຂອງເດັກນ້ອຍ,ຣາຍໄດ້ແລະຊັບສິນຂອງພໍ່ແມ່ຈະບໍ່ຖືກເບິ່ງໃສ່ເມື່ອພິຈາຣະນາເບິ່ງສິດທິຮັບການຊ່ວຍເຫລືອຂອງເດັກນ້ອຍສຳລັບການສະລະສິດ. ໃນກໍຣະນີຂອງຜູ້ໃຫຍ່ອາສັຍຢູ່ນຳຄູ່ຜົວເມັຽ,ຣາຍໄດ້ແລະຊັບສິນຂອງຄູ່ຜົວເມັຽຈະບໍ່ຖືກເບິ່ງໃສ່
- ບຸກຄົນຕ້ອງການຣະດັບຂອງການປິ່ນປົວທີ່ຖືກເອົາໃຫ້ຢູ່ໃນສະຖາບັນການປິ່ນປົວຣະຫວ່າງກາງສຳລັບຜູ້ມີຄວາມຊັກຊ້າດ້ານຈິດໃຈ (ICF/MR).
- ແຜນການອູ້ມຊູສ່ວນບຸກຄົນໄດ້ຖືກຈັດແຈງຊຶ່ງຈະສະແດງໃຫ້ເຫັນວ່າຄວາມຕ້ອງການດ້ານສຸຂະພາບ,ຄວາມປອດພັຍແລະການປັບໂຕສາມາດຖືກຕອບສນອງໄດ້ແນວໃດຢູ່ໃນຊຸມນຸມຊົນດ້ວຍການບໍລິການສະລະສິດປະຈຳເດືອນ.
- ບຸກຄົນໄດ້ຕົກລົງເຫັນພ້ອມທີ່ຈະຮັບເອົາການບໍລິການອີງຕາມເຮືອນແລະຊຸມນຸມຊົນວ່າເປັນຫົນທາງອອກຕໍ່ການບໍລິການນອນໂຮງຫມໍຢູ່ໃນ ICF/MR.
- ສຳລັບ໌ສເທົ່ານັ້ນ,ຜູ້ເຂົ້າຮ່ວມຕ້ອງແມ່ນ:
  -ມີອາຍຸ8ປີຮອດ17ປີສຳລັບການຈົດຊື່ເຂົ້ານຳຂັ້ນຕົ້ນ (ຖືກຮັບໃຊ້ຮອດອາຍຸ20ປີ) ;
  -ຖືກຕີຣາຄາເບິ່ງໃນຂັ້ນຕົ້ນວ່າເປັນການສ່ຽງສູງຫລືຮ້າຍແຮງຂອງການຈັດຫາໃຫ້ຢູ່ນອກເຮືອນຍ້ອນການປະພຶດທີ່ເຮັດນຳຍາກ;ແລະ
  -ອາສັຍຢູ່ນຳຄອບຄົວຜູ້ທີ່ເຫັນພ້ອມທີ່ຈະເຂົ້າຮ່ວມຢູ່ໃນໂຄງການ.

# ການເຂົ້າເຖິງການສະລະສິດ

ທ່ານຈະຮ້ອງຂໍໃຫ້ຖືກຈົດຊື່ເຂົ້າໃສ່ໃນການສະລະສິດຫລືຈະຖືກຈົດຊື່ເຂົ້າໃສ່ໃນການສະລະສິດແນວຕ່າງໄດ້ໃນທຸກໆເວລາ.ທ່ານຈະສາມາດເຮັດໄດ້ໂດຍຕິດຕໍ່ໄປຫາຜູ້ຈັດການເອກສານຂອງທ່ານຫລືໂດຍການໃຊ້ຄຳຮ້ອງທາງອິນເຕີແນດ.

ຖ້າຫາກວ່າທ່ານບໍ່ໄດ້ຢູ່ໃນການສະລະສິດໃນປັດຈຸບັນນີ້,ກົດເກນສຳລັບການສະລະສິດບໍ່ໄດ້ຮັບປະກັນການເຂົ້າເຖິງຫລືການຮັບເອົາການບໍລິການການສະລະສິດ.ການສະລະສິດແຕ່ລະອັນມີກຳນົດໃນຈຳນວນຄົນຜູ້ທີ່ສາມາດຖືກຮັບໃຊ້ຢູ່ໃນປີຂອງການສະລະສິດ.ອີກຢ່າງນຶ່ງ,ຜແນກ DDD ມີສິດອຳນາດທີ່ຈະຈຳກັດການຈົດຊື່ເຂົ້າໃສ່ໃນການສະລະສິດໂດຍອີງຕາມການມີໄວ້ໃຫ້ໃນເງິນທຶນສຳລັບຜູ້ເຂົ້າຮ່ວມໃນການສະລະສິດຄົນໃຫມ່.

# ສິດທິການຟັງເຣື່ອງຂອງອຳນາດການປົກຄອງ

ມັນສຳຄັນທີ່ທ່ານຈະຮູ້ຈັກວ່າທ່ານມີສິດທິໃນການຟັງເຣື່ອງຂອງອຳນາດການປົກຄອງ (ການຟັງເຣື່ອງ) ຖ້າຫາກວ່າທ່ານຄັດຄ້ານໃນແນວໃດແນວນຶ່ງຂອງການກະທຳຕໍ່ລົງໄປນີ້:

**ການພິຈາຣະນາເບິ່ງສິດທິຮັບການຊ່ວຍເຫລືອຂອງ DDD:**

- ຖ້າຫາກວ່າທ່ານຖືກປະຕິເສດໃນສິດທິຮັບການຊ່ວຍເຫລືອ;ຫລື
- ສິດທິຮັບການຊ່ວຍເຫລືອຂອງທ່ານໄດ້ຖືກຕັດ;ຫລື
- ມັນມີການຊັກຊ້າຢ່າງບໍ່ມີເຫດຜົນໃນການດຳເນີນການໃນໃບຄຳຮ້ອງຂອງທ່ານສຳລັບສິດທິຮັບການຊ່ວຍເຫລືອ.

**ເງື່ອນໄຂຂອງການບໍລິການ**

- ຖ້າຫາກວ່າທ່ານບໍ່ເຫັນພ້ອມນຳຊະນິດຫລືຈຳນວນຂອງການບໍລິການທີ່ທ່ານໄດ້ຖືກອະນຸມັດໃຫ້ໄດ້ຮັບ;ຫລື
- ຖ້າຫາກວ່າທ່ານຖືກປະຕິເສດໃນການບໍລິການທີ່ທ່ານໄດ້ຂໍເອົາ;ຫລື
- ຖ້າຫາກວ່າທ່ານໄດ້ຍ້າຍໄປຫາບ່ອນຢູ່ອາສັຍບ່ອນຕ່າງ,ບໍ່ແມ່ນບ່ອນທີ່ທ່ານເລືອກເອົາ;ຫລື
- ຖ້າຫາກວ່າການບໍລິການຂອງທ່ານໄດ້ຖືກລຸດລົງຫລືຢຸດ;ຫລື
- ຖ້າຫາກວ່າຜແນກ DDDທຳການຕັດສິນວ່າການບໍລິການທີ່ມີຢູ່ໃນການສະລະສິດປັດຈຸບັນຂອງທ່ານສາມາດຕອບສນອງຄວາມຕ້ອງການດ້ານສຸຂະພາບແລະຄວາມຢູ່ດີມີແຮງຂອງທ່ານແລະທ່ານບໍ່ເຫັນພ້ອມນຳ.

**ການບໍ່ຍອມຮັບເອົາຫລືການປະຕິເສດໃນຄຳຮ້ອງຂໍ:**

- ການປະຕິເສດໃນຄຳຮ້ອງຂໍເພື່ອຈະຮັບເອົາການບໍລິການ ICF/MR ແທນທີ່ວ່າຈະເປັນ ການບໍລິການສະລະສິດ;
- ການບໍ່ຍອມຮັບເອົາເພື່ອຈະປະຕິບັດຕາມຄຳຮ້ອງຂໍຂອງທ່ານທີ່ຈະບໍ່ໃຫ້ສິ່ງໃບແຈ້ງການໄປຫາຄົນອືnຄົນໃດຄົນນຶ່ງ;ຫລື
- ການບໍ່ຍອມຮັບເອົາທີ່ຈະຖືກພິຈາຣະນາສຳລັບການສະລະສິດແນວໃດແນວນຶ່ງທີ່ທ່ານຮ້ອງຂໍ.

ຖ້າຫາກວ່າທ່ານມີຄຳຖາມ,ກະຣຸນາໂທໄປຫາຜູ້ຈັດການຊ່ວຍເຫລືອເອກສານDDD ຂອງທ່ານເພື່ອຣາຍລະອຽດເພີ້ມເຕີມ.

# ການບໍລິການສະລະສິດທີ່ຖືກຕີຄວາມຫມາຍ

ການບໍລິການທີ່ຜູ້ຮັບເອົາການສະລະສິດສ່ວນບຸກຄົນໄດ້ຮັບຢູ່ໄດ້ຖືກອີງໃສ່ຄວາມຕ້ອງການດ້ານສຸຂະພາບແລະຄວາມສຸກທຸກທີ່ຖືກຊີ້ບອກແລະຖືກບັນທຶກໄວ້ຢູ່ໃນແຜນການອູ້ມຊູສ່ວນບຸກຄົນ.

## ເຮືອນເບິ່ງແຍງຜູ້ໃຫຍ່ຢູ່ໃນຄອບຄົວ (AFH)

ເຮືອນຄອບຄົວທັມມະດາຊຶ່ງຢູ່ໃນນັ້ນບຸກຄົນໄດ້ຖືກອອກໃບປະກາດໃຫ້ເອົາການເບິ່ງແຍງດູແລສ່ວນຕົວ,ການເບິ່ງແຍງພິເສດ,ຫ້ອງແລະກິນນອນນຳໃຫ້ແກ່ຄົນຜູ້ໃຫຍ່ຫລາຍກວ່າຄົນນຶ່ງຄົນແຕ່ວ່າຕ່ຳກວ່າ6ຄົນ

## ການເບິ່ງແຍງດູແລຜູ້ໃຫຍ່ຢູ່ຕາມເຮືອນ (ARC)

ເຮືອນກິນນອນສຳລັບຜູ້ໃຫຍ່ທີ່ບໍ່ກ່ຽວພັນກັນ7ຄົນຫລືຫລາຍກວ່ານັ້ນ,ເອົາຄວາມຊ່ວຍເຫລືອໃຫ້ນຳກິຈກັມຂອງການດຳລົງຊີວິດປະຈຳວັນ.

## ການກຳກັບນຳແລະການປຶກສາດ້ານການປະພຶດ

ໂຄງການໄດ້ຖືກອອກແບບມາເພື່ອຈະອູ້ມຊູບຸກຄົນທີ່ຈະປະພຶດຕົນເອງໃນແບບທີ່ຈະເພີ້ມພູນການລວມຕົວຂອງເຂົາເຈົ້າເອງເຂົ້າໃນຊຸມນຸມຊົນ,ລວມທັງການເຂົ້າແຊກແຊງໂດຍກົງເພື່ອຈະລຸດຜ່ອນການທ້າທາຍດ້ານການປະພຶດຊຶ່ງຈະປານີປານອມຄວາມສາມາດຂອງບຸກຄົນທີ່ຈະຢູ່ໃນຊຸມນຸມຊົນຕໍ່ໄປ.

## ການເຂົ້າເຖິງຊຸມນຸມຊົນ

ການບໍລິການທີ່ຖືກເອົາໃຫ້ຢູ່ໃນຊຸມນຸມຊົນສຳລັບບຸກຄົນອາຍຸ 62 ລືແກ່ກວ່າເພື່ອຈະເນັ້ນຫນັກຫລືຮັກສາຄວາມສາມາດເຮັດໄດ້,ການຮວມເຂົ້າເປັນອັນນຶ່ງອັນດຽວກັນຂອງຜູ້ຮັບການຊ່ວຍເຫລືອ,ແລະຄວາມຊຳນານທາງຮ່າງກາຍຫລືຈິດໃຈເພື່ອວ່າຈະຊ່ວຍເຫລືອບຸກຄົນໃຫ້ກ້າວຫນ້າໄປສູ່ວຽກງານຫລືການອອກກິນເບັ້ຽບຳນານ.

## ການຊີ້ນຳຂອງຊຸມນຸມຊົນ

ການບໍລິການຣະຍະສັ້ນຊຶ່ງຈະເພີ້ມການເຂົ້າເຖິງການອູ້ມຊູຂອງຊຸມນຸມຊົນທີ່ບໍ່ເປັນທາງການຊີ້ນ.

## ການຊ່ວຍເຫລືອສຸກເສີນ

ການເພີ້ມຂື້ນຊົ່ວຄາວໃນຂອບເຂດເງິນທຶນປະຈຳປີຊຶ່ງຖືກເຈາະຈົງຢູ່ໃນການສະລະສິດພື້ນຖານແລະພື້ນຖານບວກເມື່ອການບໍລິການສະລະສິດເພີ້ມເຕີມຕ້ອງໄດ້ມີ.

## ການປັບຕົວໃຫ້ເຂົ້າກັບການເຂົ້າເຖິງສະພາບແວດລ້ອມ

ການປັບຕົວໃຫ້ເຂົ້າກັນທາງຮ່າງກາຍໃສ່ເຮືອນຊຶ່ງຕ້ອງໄດ້ມີສຳລັບຄົນນັ້ນຈະດຳເນີນອາສັຍຢູ່ໃນຊຸມນຸມຊົນ.

## ການບໍລິການແຜນການຂອງຣັດທີ່ຕໍ່ອອກໄປ

ການບໍລິການເຫນືອເກີນຂອບເຂດຂອງແຜນການເມດີແຄດຂອງຣັດສຳລັບການຝຶກແອບດ້ານວິຊາຊີບ,ຮ່າງກາຍ,ການປາກເວົ້າ,ແລະພາສາ.

## ການບໍລິການດ້ານການເຮັດໃຫ້ສຸຂະພາບໂຣກຈິດທຸ່ນທ່ຽງ

ການບໍລິການຊ່ວຍບຸກຄົນຜູ້ທີ່ປະເຊີນຫນ້າກັບຄວາມເດືອດຮ້ອນໃນສຸຂະພາບໂຣກຈິດ.

## ການເບິ່ງແຍງດູແລສ່ວນຕົວ

ຂໍ ກຳນົດຂອງການຊ່ວຍເຫລືອນຳກິຈກັມຂອງການດຳລົງຊີວິດປະຈຳວັນ.

## ບຸກຄົນ-ຕໍ່-ບຸກຄົນ

ຊ່ວຍເຫລືອຜູ້ເຂົ້າຮ່ວມເພື່ອຈະຄືບຫນ້າໄປສູ່ວຽກງານໂດຍຜ່ານແຜນການເຮັດສະເພາະສ່ວນບຸກຄົນ,ການສິດສອນຄວາມຊຳນານ,ແລະຣາຍລະອຽດແລະການສົ່ງຕໍ່.

## ການບໍລິການກ່ອນວຽກງານ

ການບໍລິການທີ່ກະຕຽມຜູ້ໃຫຍ່ສຳລັບວຽກງານ

## ການບໍລິການປັບໂຕເຂົ້າກັບບ່ອນຢູ່ອາສັຍ

ການຊ່ວຍເຫລືອເພື່ອຈະຮຽນຮູ້,ເພີ້ມພູນແລະຮັກສາໄວ້ຄວາມຊຳນານດ້ານສັງຄົມແລະການປັບໂຕທີ່ຈຳເປັນສຳລັບການດຳຣົງຊີວິດຢູ່ໃນຊຸມນຸມຊົນ.ການບໍລິການມຸ່ງຫມາຍໃສ່ສຸຂະພາບແລະຄວາມປອດພັຍ,ອຳນາດສ່ວນຕົວແລະທາງເລືອກ,ຄວາມສາມາດເຮັດໄດ້ແລະຄວາມໄວ້ວາງໃຈຕົນເອງ,ແລະຄວາມສັມພັນທີ່ດີ.

## ການປິ່ນປົວຊຳຊາຊົ່ວຄາວ

ການຜ່ອນຄາຍຣະຍະສັ້ນໃຫ້ແກ່ບຸກຄົນຜູ້ທີ່ເບິ່ງແຍງດູແລບຸກຄົນທີ່ມີຄວາມເສັຽອົງຄະດ້ານການຈະເຣີນເຕີບໂຕ.